# ຂະບວນການຂໍ່ານັບຮັບຕ້ອນວັນສ້າງຕັ້ງ ຄຊປປລ ຄົບຮອບ 67 ປີ




ໃນວັນທີ 8 ເມສາ 2022 ຄະນະບໍລິຫານງານຊາວໜຸ່ມ ທຫລ ໄດ້ຈັດຂະບວນການເພື່ອຂໍ່ານັບຮັບຕ້ອນວັນສ້າງຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວຄົບຮອບ 67 ປີ ພາຍໃຕ້ການນໍາພາຂອງສະຫາຍ ບຸນທະວີ ສຸກດາວົງ ເລຂາຄະນະບໍລິຫານງານຊາວໜຸ່ມທະນາຄານແຫ່ງ ສປປ ລາວ (ທຫລ), ຫໍວໜ້າກົມພິມຈໍາໜ່າຍ ທຫລ ໂດຍມີສະມາຊິກຊາວໜຸ່ມ ທຫລ ເຂົ້າຮ່ວມຢ່າງພ້ອມພຽງ.






ສະຫາຍ ບຸນທະວີ ສຸກດາວົງ ໄດ້ໃຫ້ຮູ້ຈຸດປະສົງຂອງຂະບວນການໃນຄັ້ງນີ້ວ່າ: ເພື່ອເປັນການທວນຄືນມູນເຊື້ອແຫ່ງການກໍາເນີດ, ເຕີບໃຫຍ່ຂະຫຍາຍຕົວຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວໃນພາລະກິດປະຕິວັດ ໃນໄລະຍະຕໍ່ສູ້

ປົດປ່ອຍຊາດ ແລະ ໃນໄລຍະພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ພາຍໃຕ້ການນໍາພາໂດຍກົງຮອບດ້ານຂອງພັກປະຊາຊົນປະຕິວັດລາວທີ່ເຕັມໄປດ້ວຍຄວາມອົງອາດກ້າຫານ, ເສຍສະຫຼະຢ່າງພິລາດອາດຫານ, ຫ້າວຫັນປະຈັນບານເຂົ້າທຸກວຽກງານຢ່າງສົມກຽດ ແນໃສ່ສ້າງຄວາມຮັບຮູ້, ເຂົ້າໃຈເຊື່ອມຊຶມ, ກໍາແໜ້ນມູນເຊື້ອ, ໜ້າທີ່ຂອງການຈັດຕັ້ງຊາວໜຸ່ມ ແລະ ຜັນຂະຫຍາຍເຂົ້າໃນພາລະກິດການເມືອງໃນໄລຍະໃໝ່ຂອງຕົນ. ຄະນະບໍລິຫານງານຊາວໜຸ່ມທະນາຄານແຫ່ງ ສປປ ລາວ ຈຶ່ງໄດ້ຈັດຂະບວນການອອກແຮງງານລວມ ດ້ວຍການອະນາໄມສະຖານທີ່ບ່ອນເຮັດວຽກຢູ່ຕາມສໍານັກງານຫ້ອງການຂອງຕົນເອງ ແລະ ນອກຈາກນັ້ນຍັງໄດ້ຈັດສັກຢາວັກແຊັງກັນພະຍາດ Covid-19 ເຂັມທີ 4 (ເຂັມກະຕຸ້ນທີ 2) ໃຫ້ພະນັກງານທະນາຄານແຫ່ງ ສປປ ລາວ ເພື່ອປ້ອງກັນ ແລະ ຫຼຸດຜ່ອນຄວາມກັງວົນໃນເວລາມີການພົວພັນວຽກງານ, ການເຂົ້າຮ່ວມກອງປະຊຸມ, ສໍາມະນາ ແລະ ອື່ນໆ.






#ຂ່າວ ແລະ ພາບໂດຍ: ນາງ ປາໃນ ພົນທະລາ

## ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດຄ່າເງິນກີບລາວ